ChildFund Laos

# ປະກາດການປະມູນ

ເອກະສານປະມູນເລກທີ: **CFL 004/2023**

ວັນທີ: **31/08/2023**

**ອົງການ ຊາຍຟັນ ປະຈຳ ສປປ ລາວ ມີຄວາມຍິນດີ ຂໍເຊີນ ບັນດາບໍລິສັດ, ຜູ້ປະກອບການ ແລະ ບັນດາ ໂຮງງານ ເຟີນິເຈີ ທີ່ມີເງື່ອນໄຂ ແລະ ມີໃບອະນຸຍາດດຳເນີນທຸລະກິດ ເພື່ອເຂົ້າຮ່ວມການປະມູນແຂ່ງຂັນລາຄາໃນການຈັດຊື້ ແລະ ສະໜອງເຟີນິເຈີ ເຊັ່ນ: ໂຕະ, ຕັ່ງ, ກະດານ, ຕູ້ໃສ່ເອກະສານ ໃຫ້ໂຮງຮຽນ ບ້ານ ລ້ອງເອືອດ, ເມືອງ ຊຳເໜືອ ແລະ ໂຮງຮຽນ ປ່າຮ່າງ, ປ່າຂີມນ້ອຍ, ຫ້ວຍຮຽງ, ນາໂງ່ນ, ເມືອງ ສົບເບົາ, ແຂວງ ຫົວພັນ.**

ເງື່ອນໄຂຂອງການປະມູນ:

1. ຜູ້ປະມູນຕ້ອງມີໜັງສືຄ້ຳປະກັນການປະມູນຈາກທະນາຄານເຊິ່ງເທົ່າກັບ **30,000,000** ກີບ(ສາມສິບລ້ານກີບ), ໜັງສືຄ້ຳປະກັນຈາກທະນາຄານ ຕ້ອງມີອາຍຸຮັບປະກັນ **30** ວັນ. ໜັງສືຄ້ຳປະກັນຈາກທະນາຄານຈະສົ່ງຄືນໃຫ້ຜູ້ເຂົ້າຮ່ວມການປະມູນ ທີ່ບໍ່ໄດ້ຮັບຊະນະການປະມູນ ພາຍໃນເວລາ **30** ວັນ. ສຳລັບ ຜູ້ທີ່ໄດ້ຮັບຊະນະການປະມູນ ຕ້ອງມີ ໜັງສືຄ້ຳປະກັນການປະຕິບັດສັນຍາເທົ່າກັບ **10%** ຂອງມູນຄ່າການປະມູນທັງໝົດ ແລະ ຕ້ອງມີ ອາຍຸຮັບປະກັນ **60** ວັນ;
2. ຜູ້ປະມູນ ຕ້ອງສຳເລັດວຽກ ການຈັດຊື້ ແລະ ສະໜອງເຟີນິເຈີທັງໝົດ ແລະ ຈັດສົ່ງຕາມສະຖານທີ່ກຳນົດຂ້າງເທິງນີ້ ພາຍໃນກຳນົດເວລາ 75 ວັນ ພາຍຫຼັງເຊັນສັນຍາ;
3. ລາຄາທີ່ສະເໜີມາຕ່ຳສຸດຈະບໍ່ເປັນມາດຖານທີ່ຈະໄດ້ຮັບການພິຈາລະນາພຽງຢ່າງດຽວ, ຄຸນະພາບ ແລະ ປະສົບການທີ່ຜ່ານມາກໍຈະໄດ້ຮັບການພິຈາລະນາເຊັ່ນກັນ;
4. ຜູ້ທີ່ສົນໃຈຢາກເຂົ້າຮ່ວມການປະມູນສາມາດໄປຮັບເອກະສານປະມູນໄດ້ຈາກຫ້ອງການອົງການຊາຍຟັນ ປະຈຳ ສປປ ລາວ ທີ່ ບ້ານ ພັນໄຊ, ເມືອງຊຳເໜືອ, ແຂວງຫົວພັນ ເວລາ **8:30-12:00** ເຖິງ **13:30-16:00**, ວັນຈັນ ເຖິງ ວັນສຸກ.ໂທ **064 314535.** ນັບຕັ້ງແຕ່ມື້ລົງປະກາດເປັນຕົ້ນໄປ ຈົນຮອດວັນທີ 13/09/2023;
5. ການເປີດຊອງປະມູນຢ່າງເປັນທາງການຈະມີຂຶ້ນໃນວັນທີ **13/09/2023** ເວລາ **14:00** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຜູ້ຕາງໜ້າຜູ້ເຂົ້າປະມູນ (ຜູ້ທີ່ມີຄວາມສົນໃຈເຂົ້າ ຮ່ວມເປັນພິຍານ), ຢູ່ທີ່ຫ້ອງການອົງການຊາຍຟັນ ປະຈຳ ສປປ ລາວ ທີ່ ບ້ານ ພັນໄຊ, ເມືອງ ຊຳເໜືອ ແຂວງ ຫົວພັນ;
6. ຊອງປະມູນຕ້ອງປິດກາວແລ້ວ ແລະ ລະບຸວ່າເອກະສານປະມູນ ຫ້າມເປີດກ່ອນ ວັນທີ **13/09/2023** ກ່ອນເວລາ **14:00** ແລ້ວ ຕ້ອງສົ່ງໃຫ້ຮອດຫ້ອງການ ອົງການຊາຍຟັນ ປະຈຳ ສປປ ລາວ ທີ່ບ້ານ ພັນໄຊ, ເມືອງ ຊຳເໜືອ, ແຂວງຫົວພັນ ວັນທີ **13/09/2023** ກ່ອນ ເວລາ **13:00** ຕາມທີ່ແຈ້ງໃນເອກະສານປະມູນ ໂດຍໃຫ້ລົງທະບຽນທີ່ມີໃບຮັບຮອງວ່າໄດ້ຮັບ ຫຼື ໄດ້ສົ່ງ ເຊິ່ງຕ້ອງໄດ້ເຊັນຢັ້ງຢືນຈາກຜູ້ສົ່ງ ແລະ ຜູ້ຮັບ; (ກໍລະນີ ຕ້ອງການສົ່ງເອກະສານກ່ອນວັນທີ **13/09/2023** ແມ່ນໃຫ້ມາສົ່ງຢູ່ຫ້ອງການຊາຍຟັນ ປະຈຳ ສປປ ລາວ ທີ່ ບ້ານ ພັນໄຊ, ເມືອງ ຊຳເໜືອ, ແຂວງ ຫົວພັນ ແລະ ຕ້ອງມີການລົງທະບຽນວ່າໄດ້ຮັບ ຫຼື ໄດ້ສົ່ງ).

ຕູ້ ປ.ນ 761, ເຮືອນເລກທີ 598, ໜ່ວຍ 26, ບ. ສະພານທອງເໜືອ, ມ. ສີສັດຕະນາກ, ນະຄອນຫຼວງວຽງຈັນ
P.O. Box: 761, House No. 598, Unit 26, Saphanthong Neua Village, Sisattanak District, Vientiane
Tel: +856 (0) 21 412 966 | Fax: +856 (0) 21 263 217 | E-mail: info@childfund.org.la

ພວກເຮົາຮ່ວມກັນສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ແລະ ການປ່ຽນແປງວິຖີທາງເພື່ອເຮັດໃຫ້ເດັກດ້ອຍໂອກາດ
ແລະ ໄວໜຸ່ມທີ່ຢູ່ໃນສະພາບແວດລ້ອມທີ່ມີຄວາມຫຼາກຫຼາຍ ສາມາດສະແດງອອກ ແລະ ຮັບຮູ້ເຖິງສິດທິຂອງເຂົາເຈົ້າ.
We partner to create community and systems change which enables vulnerable children and young people, in all their diversity, to assert and realise their rights.